ຄວາມຈິງຕໍ່ມວນຊົນ

Ottawa County Health Department

# ໂຣກປອດແຫ້ງ (TB) [TUBERCULOSIS]

**ໂຣກປອດແຫ້ງຄືຫຍັງ?**

ໂຣກປອດແຫ້ງເປັນພະຍາດທີ່ຕິດຕໍ່ກັນໄດ້ເຊິ່ງເກີດຈາກແບັກແທເລຍ. ມັນເກີດຂື້ນຢູ່ໃນປອດ, ແຕ່ກໍສາມາດເກີດຂື້ນໃນອະໄວຍະວະອື່ນໆໄດ້ຄືກັນ.

**ໂຣກປອດແຫ້ງແຜ່ລາມແນວໃດ?**

ໂຣກປອດແຫ້ງອາດຈະແຜ່ລາມດ້ວຍວິທີດັ່ງຕໍ່ໄປນີ້:

- ຄົນທີ່ເປັນໂຣກປອດແຫ້ງແລະມີອາການ**ສະແດງອອກ** ສາມາດນໍາເຊື້ອໂຣກນີ້ໃຫ້ຜູ້ອື່ນຜ່ານທາງອາກາດ ໂດຍການຈາມ ຫລື ການໄອ.
- ຄົນທີ່ມີໂຣກປອດແຫ້ງ**ແຕ່ແຝງຢູ່** (ບໍ່ມີອາການສະແດງອອກ) ບໍ່ສາມາດແຜ່ລາມເຊື້ອໂຣກນີ້ໃຫ້ຄົນອື່ນໄດ້ ແລະ ຈະບໍ່ມີອາການແນວໃດເລີຍ.

**ອາການບາງຢ່າງມີຫຍັງແດ່?**

ອາການຂອງໂຣກປອດແຫ້ງອາດຈະຮ່ວມດ້ວຍ:

- ໄອ
- ຄີງຮ້ອນ
- ເມື່ອຍ
- ເຫື່ອອອກຕອນກາງຄືນ
- ໄອອອກເປັນເລືອດ
- ນໍ້າໜັກລຸດລົງໂດຍບໍ່ຕັ້ງໃຈ
- ສຽງຫາຍໃຈມີສຽງຄືສຽງຜີວ
- ເຈັບໜ້າອົກ
- ຫາຍໃຈຍາກ

**ຈະກວດພົບໂຣກປອດແຫ້ງໄດ້ແນວໃດ?**

ການກວດຈະຮ່ວມດ້ວຍການສ່ອງໄຟຟ້າ ແລະ ກວດຂີ້ກະເທີ່.

**ຈະຮັກສາໂຣກປອດແຫ້ງໄດ້ດ້ວຍວິທີໃດ?**

ຄົນທີ່ເປັນໂຣກນີ້ແລະມີອາການ**ສະແດງອອກ**ຈະຮັກສາໂດຍຢາຫລາຍໆຢ່າງປົນກັນ. ຕາມທໍາມະດາແລ້ວການຮັກສາຈະຍາວເຖິງ 6 ເດືອນ ຫລື ດົນກວ່ານັ້ນ. ຜູ້ທີ່ເປັນໂຣກປອດແຫ້ງນີ້ຕ້ອງຢູ່ແຍກຈາກຄົນອື່ນຈົນກວ່າຊ່ວງລະຍະຂອງການແຜ່ລາມນີ້ຜ່ານໄປ.

ຄົນທີ່ເປັນໂຣກນີ້ແຕ່**ບໍ່ມີອາການສະແດງອອກ**ຈະຖືກຮັກສາປະມານເກົ້າເດືອນດ້ວຍຢາຕ້ານເຊື້ອໂຣກຢ່າງດຽວ. ຄົນທີ່ມີເຊື້ອໂຣກນີ້ຈະບໍ່ກາຍເປັນເຊື້ອໂຣກທີ່ມີອາການສະແດງອອກ, ໂດຍສະເພາະແລ້ວຄົນທີ່ກິນຢາຕ້ານເຊື້ອໂຣກເຕັມເກົ້າເດືອນ.

**ຈະປ້ອງກັນຈາກໂຣກປອດແຫ້ງໄດ້ແນວໃດ?**

ໂຣກປອດແຫ້ງນີ້ສາມາດປ້ອງກັນໄດ້. ຜູ້ທີ່ເຮັດວຽກກ່ຽວກັບຝ່າຍສຸຂະພາບ ແລະ ຜູ້ທີ່ມີບັນຫາເລື່ອງສຸຂະພາບດົນນານຄວນຈະໄດ້ຮັບການກວດຜິວໜັງ.ຜູ້ທີ່ໃກ້ຊິດນໍາຄົນທີ່ເປັນພະຍາດນີ້ກໍຄວນຈະໄດ້ຮັບການກວດຜິວໜັງຄືກັນ.ຖ້າຫາກການກວດພົບວ່າຄົນຜູ້ນັ້ນມີເປັນສິ່ງສໍາຄັນຫລາຍທີ່ຄົນຜູ້ນັ້ນຕ້ອງມີການກວດ ແລະ ຮັກສາຢ່າງຖືກຕ້ອງ.ການຮັກສາເຊື້ອໂຣກປອດແຫ້ງໃຫ້ທັນເວລາ ແລະເໝາະສົມຈະສາມາດປ້ອງກັນການແຜ່ລາມຂອງພະຍາດນີ້ໄດ້.

**ສໍາລັບລາຍລະອຽດເພີ່ມເຕີມກ່ຽວກັບ ໂຣກປອດແຫ້ງ ໃຫ້ຕິດຕໍ່ໄປທີ່:**

Ottawa County Health Department
www.miOttawa.org
Center for Disease Control and Prevention
www.cdc.gov/nchstp/tb/faqs/pdfs/qa.pdf
ເລກໂທຣະສັບ: (888) 246-2675
Medline Plus/National Institutes of Health
www.nlm.nih.gov/medlineplus/ency/article/000077.htm

12251 James St., Suite 400
Holland, MI 49424
ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643
ແວບໄຊ: www.miOttawa.org